# ການປັບປຸງການເປັນຄູສອນໃຫ້ເປັນເໝືອນດັ່ງພຣະຄຣິດ—ການປະເມີນສ່ວນບຸກຄົນ

ໃນຖານະຄູສອນ, ເຮົາຄວນປະເມີນຈຸດແຂງ ແລະ ຈຸດອ່ອນຂອງເຮົາເປັນປະຈຳ ເພື່ອວ່າເຮົາຈະສາມາດຊ່ວຍໃຫ້ ຜູ້ຮຽນ ສ້າງສັດທາໃນພຣະເຢຊູຄຣິດ ແລະ ກາຍເປັນເໝືອນດັ່ງພຣະອົງຫລາຍຂຶ້ນ. ກິດຈະກຳດັ່ງຕໍ່ໄປນີ້ສາມາດຊ່ວຍໃຫ້ທ່ານນຳໃຊ້ຫລັກທຳການສິດສອນເໝືອນດັ່ງພຣະຄຣິດ. ພິຈາລະນາວ່າ ແຕ່ລະຂໍ້ດັ່ງຕໍ່ໄປນີ້ອະທິບາຍກ່ຽວກັບທ່ານໃນຖານະຄູສອນໄດ້ດີປານໃດ. ເລືອກຄຳຕອບທີ່ເໝາະສົມທີ່ສຸດສຳລັບແຕ່ລະຂໍ້: (1) ບໍ່ຄ່ອຍ, (2) ບາງຄັ້ງ, (3) ເລື້ອຍໆ, (4) ເກືອບທຸກຄັ້ງ.

ແລ້ວ, ຕາມການດົນໃຈຈາກພຣະວິນຍານ, ໃຫ້ເລືອກສອງສາມຢ່າງທີ່ທ່ານຢາກປັບປຸງດ້ວຍການອະທິຖານ. ກຳນົດເປົ້າໝາຍ, ແລະ ໃຊ້ແຫລ່ງຊ່ວຍນີ້ເພື່ອຊ່ວຍທ່ານປັບປຸງ.

## ສຸມໃສ່ພຣະເຢຊູຄຣິດ

__ຂ້ອຍສິດສອນກ່ຽວກັບພຣະເຢຊູຄຣິດ ບໍ່ວ່າຂ້ອຍກຳລັງສິດສອນຫຍັງ.

__ຂ້ອຍເນັ້ນໜັກຕົວຢ່າງຂອງພຣະເຢຊູຄຣິດ.

__ຂ້ອຍຊ່ວຍໃຫ້ຜູ້ຮຽນຮັບຮູ້ຄວາມຮັກ, ອຳນາດ, ແລະ ຄວາມເມດຕາຂອງພຣະຜູ້ເປັນເຈົ້າ ໃນຊີວິດຂອງເຂົາເຈົ້າ.

__ຂ້ອຍຊ່ວຍໃຫ້ຜູ້ຮຽນເພີ່ມຄວາມເຂັ້ມແຂງໃຫ້ແກ່ຄວາມສຳພັນຂອງເຂົາເຈົ້າກັບພຣະບິດາເທິງສະຫວັນ ແລະ ພຣະເຢຊູຄຣິດ.

__ຂ້ອຍຊ່ວຍໃຫ້ຜູ້ຮຽນຕັ້ງໃຈພະຍາຍາມທີ່ຈະເປັນເໝືອນດັ່ງພຣະເຢຊູຄຣິດຫລາຍຂຶ້ນ.

## ຮັກຜູ້ທີ່ທ່ານສິດສອນ

__ຂ້ອຍພະຍາຍາມເຫັນຜູ້ຮຽນແບບທີ່ພຣະເຈົ້າເຫັນເຂົາເຈົ້າ.

__ຂ້ອຍສະແຫວງຫາທີ່ຈະຮູ້ຈັກຜູ້ທີ່ຂ້ອຍສິດສອນ—ເພື່ອຈະໄດ້ເຂົ້າໃຈສະຖານະການ, ຄວາມຕ້ອງການ, ແລະ ຄວາມເຂັ້ມແຂງຂອງເຂົາເຈົ້າ.

__ຂ້ອຍອະທິຖານເພື່ອຜູ້ຮຽນໂດຍກ່າວຊື່.

__ຂ້ອຍສ້າງສະພາບແວດລ້ອມທີ່ປອດໄພ ບ່ອນທີ່ທຸກຄົນໄດ້ຮັບຄວາມເຄົາລົບນັບຖື ແລະ ຮູ້ວ່າການມີສ່ວນຮ່ວມຂອງເຂົາເຈົ້ານັ້ນມີຄຸນຄ່າ.

__ຂ້ອຍຊອກຫາວິທີທີ່ເໝາະສົມໃນການສະແດງຄວາມຮັກຂອງຂ້ອຍ.

## ສິດສອນໂດຍພຣະວິນຍານ

__ຂ້ອຍກະກຽມຕົວເອງທາງວິນຍານເພື່ອສິດສອນ.

__ຂ້ອຍຕອບຮັບການກະຕຸ້ນທາງວິນຍານກ່ຽວກັບຄວາມຕ້ອງການຂອງຜູ້ຮຽນ.

__ຂ້ອຍສ້າງສະພາບແວດລ້ອມ ແລະ ໂອກາດສຳລັບຜູ້ຮຽນເພື່ອຮັບການສິດສອນໂດຍພຣະວິນຍານບໍລິສຸດ.

__ຂ້ອຍຊ່ວຍໃຫ້ຜູ້ຮຽນສະແຫວງຫາ, ຮັບຮູ້, ແລະ ກະທຳຕາມການເປີດເຜີຍສ່ວນຕົວ.

__ຂ້ອຍສະແດງປະຈັກພະຍານເລື້ອຍໆ, ແລະ ຂ້ອຍຊຸກຍູ້ໃຫ້ຜູ້ຮຽນແບ່ງປັນຄວາມຮູ້ສຶກ, ປະສົບການ, ແລະ ປະຈັກພະຍານຂອງເຂົາເຈົ້າ.

## ສິດສອນຄຳສອນ

__ຂ້ອຍຮຽນຮູ້ຄຳສອນຂອງພຣະເຢຊູຄຣິດດ້ວຍຕົວເອງ.

__ຂ້ອຍສິດສອນຈາກພຣະຄຳພີ ແລະ ຈາກຖ້ອຍຄຳຂອງສາດສະດາຍຸກສຸດທ້າຍ.

__ຂ້ອຍຊ່ວຍໃຫ້ຜູ້ຮຽນສະແຫວງຫາ, ຮັບຮູ້, ແລະ ເຂົ້າໃຈຄວາມຈິງໃນພຣະຄຳພີ.

__ຂ້ອຍສຸມໃສ່ຄວາມຈິງທີ່ນຳພາໄປສູ່ການປ່ຽນໃຈເຫລື້ອມໃສ ແລະ ສ້າງສັດທາໃນພຣະເຢຊູຄຣິດ.

__ຂ້ອຍຊ່ວຍໃຫ້ຜູ້ຮຽນຊອກຫາຄວາມກ່ຽວຂ້ອງສ່ວນຕົວໃນ ຄຳສອນຂອງພຣະເຢຊູຄຣິດ.

## ເຊື້ອເຊີນການຮຽນຮູ້ທີ່ພາກພຽນ

__ຂ້ອຍຊ່ວຍໃຫ້ຜູ້ຮຽນມີຄວາມຮັບຜິດຊອບຕໍ່ການຮຽນຮູ້ຂອງເຂົາເຈົ້າ.

__ຂ້ອຍຊຸກຍູ້ໃຫ້ຜູ້ຮຽນມາຮູ້ຈັກພຣະຜູ້ຊ່ວຍໃຫ້ລອດ ໂດຍການສຶກສາພຣະກິດຕິຄຸນທຸກວັນ.

__ຂ້ອຍເຊື້ອເຊີນໃຫ້ຜູ້ຮຽນກະກຽມທີ່ຈະຮຽນຮູ້.

__ຂ້ອຍຊຸກຍູ້ໃຫ້ຜູ້ຮຽນແບ່ງປັນຄວາມຈິງທີ່ເຂົາເຈົ້າກຳລັງຮຽນຮູ້.

__ຂ້ອຍເຊື້ອເຊີນໃຫ້ຜູ້ຮຽນດຳລົງຊີວິດຕາມສິ່ງທີ່ເຂົາເຈົ້າກຳລັງຮຽນຮູ້.